# ບົວກາງວັນ ບານບໍ່ຄາຍ

ເຫັນບົວວັນເຈົ້າບານແຍ້ມ　　　　ອ້າຍແນມເບິ່ງສຸດແສງຕາ
ຢາກຢັ່ງຕີນລົງໄປຫາ　　　　ແຕ່ຢ້ານບົວວັນຊ້ຳ
ເລີຍຈຳເປັນຕ້ອງຝັນຄ້າງ　　　　ຈົນຄາງເຫຼືອງຢູ່ແຄມຝັ່ງ
ຢ້ານບົວໄປບໍ່ສັ່ງ　　ລາບຶງໜອງນ້ຳນ້ອຍ　ໄປລອຍນ້ຳອ່າວໄກ

ບົວກາງວັນຄືດອກໄມ້　　　　ໄວ້ທຽມແທນບູຊາ　ພຸ້ນແລ້ວ
ພຸທມາ ມາລາບານ　　　　ຕະຫງ່ານຕາບໍ່ມີເສົ້າ
ຢາກເດັດເອົາໄປເອ້　　　　ຂັນບູຊາໃຫ້ສົມຊື່　ເບິ່ງເດ
ສົມດັ່ງຄົນເຂົາລື　　ສາວຫຼັກເຈັດຊື່ກ້ອງ　　ຄົນຍໍຍ້ອງທົ່ວແດນ

ແຟນກອນທຸກເຂດແຄວ້ນ　　　　ແມ່ນວ່າຈົ່ມຣະທົມເຫງົາ　ຈິງແລ້ວ
ຄາວເຈົ້າໄລບຶງໜອງ　　　　ລ່ອງລອຍໄປບຶງນັ້ນ
ບໍ່ເຫັນບົວວັນແຍ້ມ　　　　ຫຼາຍຄົນແນມລຽບຕະຝັ່ງ
ດຽວນີ້ທາງຝຣັ່ງ　　ຕ່າງຍັງຄອຍຮຽກຮ້ອງ　ຢ້ານໜອງນ້ຳຊ້ຳເພາະບົວ

ເພື່ອນເອີຍ.... ບົວບໍ່ເຄີຍຄິດມົ້ວ　　ມົວໝົ່ນຈົນລືມບຶງ　ດອກເດີ
ເຖິງຮາກຊຳລົງຕົມ　　　　ໝູ່ມາກຊົມເຊີຍຍ້ອງ
ແມ່ນບົວທອງບານເຊົ້າ　　　　ເຈົ້າບົວວັນ ບານບໍ່ລ່າ　ຈິງເດີ
ສົມເປັນພຸທມາລາ　　ສິທັຖຖະກຳເນີດຕົ້ນ　ບົວທຽມຊົ້ນພຣະບາທອົງ　ຫັ້ນເດ

ສາວຫຼັກເຈັດດັງປັ້ງໆ　　　　ບົວສົ່ງກິ່ນໂຊຍໄກ

ບ່າວຫຼັກເຈັດຂໍຕາມໄປ                    ຄູ່ຄຽງຖນອມໄວ້

ບົວກາງໃຈຂອງອ້າຍ                    ຢ່າຫຼົງໜາຍບານວັງອື່ນ

ຢ້ານຣະທົມຂົມຂື່ນ        ເປັນບົວທອງຊອກຊ້ຳ        ຈົມລົງນ້ຳແລ້ວແຊ່ເໜັນ

ບົວວັນເອີຍ        ຢ່າຫາທາງຫຼີກເຟັ້ນ        ວິ້ງເຕັ້ນເວີ່ນລອຍຫຼາຍວັງ

ຮາກຢັ່ງລົງໜນອງໃດ                    ໃຫ້ໝັ້ນຄົງໃນໜນອງນັ້ນ

ໜນອງຫຼັກເຈັດຄືບ້ານ                    ບົວວັນບານສະຖິດຢູ່

ຈຳປາແດງ    ບານຄຽງຄູ່        ອ້າຍຢູ່ບົກນ້ອງຢູ່ນ້ຳ    ບໍ່ມີຊ້ຳເຊື່ອມຄາຍ  ຈິງແລ້ວ